# ບົດທີ 18

# ສັດຕູຂອງອານາຈັກພາກຕົ້ນ ຕາຕະລາງ ສັດຕູຂອງອານາຈັກ

ການຕໍ່ສູ້ຈາກຜູ້ປົກຄອງ
ມັດທາຍ 11:1-19

ການຕໍ່ສູ້ຈາກປະຊາຊົນທົ່ວໄປ
ມັດທາຍ 11:20-30

ການຕໍ່ສູ້ຈາກນັກສາສະໜາ
ມັດທາຍ 12:1-45

ການຕໍ່ສູ້ຈາກຍາດພີ່ນ້ອງ
ມັດທາຍ 12: 46-50



# ຕາຕະລາງສັດຕູຂອງອານາຈັກ

| | ການຕໍ່ສູ້ຢ່າງໃດ | ບົດ / ຂໍ້ | ຜູ້ທີ່ຕໍ່ສູ້ | ດ້ວຍວິທີໃດ | ແລະ ອີກ... |
|---|---|---|---|---|---|
| ມທ 11 | 1. ຈາກ ຜູ້ປົກຄອງ | ມທ 11 ຂໍ້:1-___ | | | |
| | 2. ຈາກ ປະຊາຊົນ ທົ່ວໄປ | ມທ 11 ຂໍ້:_____ | | | |
| ມທ 12 | 3. ຈາກນັກ ສາສະໜາ | ມທ 12 ຂໍ້:_____ | | 1. | ກ)<br>ຂ) |
| | | | | 2. | ກ)<br>ຂ) |
| | | | | 3. | ກ)<br>ຂ) |
| | 4. ຈາກຍາດ ພີ່ນ້ອງ | ມທ 12 ຂໍ້:_____ | | | |

**1** ແມ່ນສອງບົດໃດໃນ ມັດທາຍ ທີ່ເວົ້າເຖິງສັດຕູຂອງອານາຈັກ? ____________________

**2** ພະເຢຊູ ເຕືອນພວກສາວົກໄວ້ກ່ອນໃນ ມັດທາຍ ບົດ 10 ວ່າ ເຂົາຈະພົບການຂົ່ມເຫັງຈາກຜູ້ຕໍ່ສູ້ຕ່າງໆ ຄືການຕໍ່ ສູ້ 4 ຢ່າງໃດແດ່?

______________________________ ______________________________

______________________________ ______________________________

**3** ໃນ ມັດທາຍ ບົດ 11 ແລະ 12 ນີ້ ເຮົາເຫັນການຕໍ່ສູ້ 4 ຢ່າງນັ້ນຢ່າງລະອຽດກວ່າ. ຍົກຕົວຢ່າງກະສັດ ເຮ ໂລດເປັນຜູ້ຂັງໂຢຮັນບັບຕິສະໂຕໄວ້ ເຮໂລດບໍ່ແມ່ນນັກສາດສະໜາ ດັ່ງນັ້ນເພິ່ນເປັນຜູ້ຕໍ່ສູ້ຄຶດສະຕຽນໃນ ດ້ານໃດ? ______________________________

**4** ເຮົາຈະແຍກ ມທ ບົດ 11, 12 ນັ້ນເປັນ 4 ສ່ວນ ໃຫ້ທ່ານອ່ານໃນແຕ່ລະສ່ວນຕາມຕອນພະຄໍາພີຕໍ່ໄປນີ້ ແລ້ວ ຂຽນວ່າຕອນນັ້ນຂຶ້ນກັບການຕໍ່ສູ້ຢ່າງໃດ?

ມທ 11:1-19 ______________________________

ມທ 11:20-30 ______________________________

ມທ 12:1-45 ______________________________

ມທ 12:46-50 ______________________________

> ໃຫ້ເອົາສໍສີຂຽວຂຽນຄໍາ "ຜູ້ປົກຄອງ" ກ່ອນ ມັດທາຍ 11:1
> ໃຫ້ເອົາສໍສີຂຽວຂຽນຄໍາ "ປະຊາຊົນ" ກ່ອນ ມັດທາຍ 11:20
> ໃຫ້ເອົາສໍສີຂຽວຂຽນຄໍາ "ນັກສາດສະນາ" ກ່ອນ ມັດທາຍ 12:1
> ໃຫ້ເອົາສໍສີຂຽວຂຽນຄໍາ "ຍາດພີ່ນ້ອງ" ກ່ອນ ມັດທາຍ 12:46

## ຈາກພວກຜູ້ປົກຄອງ

**5** ຂໍໃຫ້ອ່ານ ມັດທາຍ 11:1-6

ກ. ໃນເວລານັ້ນ ໂຢຮັນບັບຕິສະໂຕ ຢູ່ໃສ? ______________________________

ຂ. ແມ່ນກະສັດເຮໂລດອົງໃດຂັງເພິ່ນໄວ້? ______________________________

ຄ. ກະສັດນັ້ນປົກຄອງ 2 ແຂວງໃດ? ____________________ ________________

ງ. ໂຢຮັນປ່າວປະກາດໃນສອງແຂວງໃດ? ________________ ________________

ຈ. ດັ່ງນັ້ນໂຢຮັນຖືກຈັບໃນແຂວງໃດ? ______________________________

> ໃນຕາຕະລາງເລື່ອງສັດຕູຂອງອານາຈັກ ຂ້າງແຖວ "ຈາກຜູ້ປົກຄອງ"
> ກ. ຢູ່ລຸ່ມຫ້ອງ "ຜູ້ທີ່ຕໍ່ສູ້" ໃຫ້ຂຽນຄໍາ "ເຮໂລດຜູ້ປົກຄອງເມືອງ"
> ຂ. ລຸ່ມຫ້ອງ "ດ້ວຍວິທີໃດ" ໃຫ້ຂຽນຄໍາ "ຂັງໂຢຮັນໄວ້ໃນແຂວງເປີເລຍ"

**6** ໃນປີຕໍ່ໄປເຮໂລດເລີຍຂ້າໂຢຮັນໃນຕົ້ນສະໄໝປີໃດໃນຊີວິດຂອງ ພະເຢຊູ? ___________
ເຮໂລດບໍ່ໄດ້ປົກຄອງດ້ວຍຄວາມຮັກ ແຕ່ປົກຄອງດ້ວຍອຳນາດຢ່າງໃດ? _____________
ແຕ່ເຖິງຢ່າງໃດກໍ່ຕາມພະເຢຊູ ບໍ່ຍອມໃຊ້ອຳນາດຄວາມຮຸນແຮງຊ່ວຍ ໂຢຮັນ.

**7** ໂຢຮັນຢູ່ໃນຄຸກຫຼາຍເດືອນມາແລ້ວ ປາກົດວ່າເພິ່ນກໍ່ເລີຍສົງໄສວ່າ ເປັນຫຍັງ ພະເຢຊູ ບໍ່ມາຊ່ອຍ. ທັງ ໂຢຮັນ ແລະພວກຄົນຢິວທົ່ວໄປລໍຖ້າວ່າອານາຈັກສະຫວັນຈະມາຕັ້ງໄວ້ ແຕ່ບໍ່ເຫັນປາກົດມາຈັກເທື່ອ. ສຸດທ້າຍຄວາມເຊື່ອຂອງເພິ່ນອ່ອນແອໄປ ໂຢຮັນສົງໄສອັນໃດເປັນຕົ້ນ? (ເລືອກ)

ກ. ພະເຢຊູ ຮ່ວມມືກັບກະສັດເຮໂລດ.

ຂ. ພະເຢຊູ ອາດຈະບໍ່ແມ່ນຜູ້ທີ່ ພະເຈົ້າສັນຍາວ່າຈະໃຫ້ມານັ້ນ.

ຄ. ພະເຢຊູ ອາດຈະໜີໄປຕ່າງປະເທດ.

**8** ເຖິງແມ່ນວ່າພວກສາວົກຂອງພະເຢຊູ ເອງກໍ່ຕາມ ມີບາງຄົນທີ່ຄິດວ່າຈະຕ້ອງຢຶດອຳນາດດ້ວຍການຮຸນແຮງຕໍ່ສູ້ ຈັກກະພັດໂລມຈຶ່ງຈະຕັ້ງອານາຈັກສະຫວັນໄວ້.
(ຈົ່ງຕື່ມຄວາມທີ່ຂາດຕໍ່ໄປນີ້ ໃນຂໍ້ ກ.ແລະ ງ.)

ກ. ໃນພວກສາວົກ ຊີໂມນພັກ _________________ ເຄີຍໃຊ້ອຳນາດຮຸນແຮງເມື່ອກ່ອນ.

ຂ. ໃນ ລູກາ 9:54 ອີກສອງຄົນໃດສະແດງຄວາມໃຈຮ້າຍ? ________________________

ຄ. ໃນ ໂຢຮັນ 6:15 ມີບາງຄົນຈະບັງຄັບໃຫ້ ພະເຢຊູ ເປັນຫຍັງ? __________________

ງ. ດັ່ງນັ້ນບໍ່ເປັນຕາງຶດທີ່ໂຢຮັນຖືກທົດລອງເຊັ່ນດຽວກັນ ພະເຢຊູ ອ້າງເຖິງຄົນເຫຼົ່ານັ້ນໃນ ມັດທາຍ 11:12 ວ່າ: “ອານາຈັກສະຫວັນກໍ່ເປັນທີ່ ___________ ຊິງເອົາ ແລ້ວຜູ້ທີ່ມີໃຈ ____________ ກໍເປັນຜູ້ທີ່ຍາດເອົາ”

**9** ພະເຢຊູ ເຂົ້າໃຈເລື່ອງການທົດລອງແລະຄວາມສົງໄສຂອງໂຢຮັນ ເພາະພະອົງຖືກການທົດລອງຄ້າຍຄືກັນ. ແມ່ນໃນການທົດລອງໃດ (ໃນປ່າ, ຢູ່ຫຼັງຄາພະວິຫານ ຫຼື ຢູ່ພູສູງ) ທີ່ມານທົດລອງໃຫ້ ພະເຢຊູ ຢຶດອຳນາດດ້ວຍການຮຸນແຮງເພື່ອຕັ້ງອານາຈັກໄວ້? _______________

**10** ພະເຢຊູ ຖືກການທົດລອງເໝືອນຢ່າງເຮົາໃນທຸກປະການ ເພາະສະນັ້ນ ພະເຢຊູ ຝາກຄວາມໄປຫາໂຢຮັນໃນຄຸກ ພ້ອມທັງໜຸນໃຈວ່າ ອານາຈັກສະຫວັນກຳລັງມາຕັ້ງໄວ້. ພະເຢຊູ ຕອບຄວາມສົງໄສຈາກສາວົກຂອງໂຢຮັນດ້ວຍເຫດການສອງປະການໃດ?
_______________________________ແລະ ________________________________

**11** ໂຢຮັນຈະຮູ້ຄວາມທຳນວາຍໃນພະຄຳພີເດີມເພາະເຫດນັ້ນ ພະເຢຊູ ຍົກເອົາພະຄຳຈາກ ເອຊາຢາ 35:5-6 ແລະ 61:1 (ເບິ່ງຂໍ້ອ້າງຢູ່ລຸ່ມໜ້າ)

ກ. ຕອນໃດເວົ້າເຖິງການອັດສະຈັນ? ________________________

ຂ. ທີ່ ພະເຢຊູ ຕອບໂຢຮັນຢ່າງນີ້ເພື່ອຫຍັງ? (ເລືອກ)

_______ ຕິຕຽນໂຢຮັນທີ່ມີຄວາມເຊື່ອນ້ອຍ.

_______ ເວົ້າຄວາມ ໜຸນໃຈໃຫ້ຮູ້ວ່າຄວາມທຳນວາຍກຳລັງສຳເລັດ.

_______ ຂໍໂທດທີ່ບໍ່ໄປຢ້ຽມເພິ່ນໃນຄຸກ.

**12** ຫຼັງຈາກສາວົກຂອງໂຢຮັນໄປແລ້ວ ພະເຢຊູ ກ່າວກັບປະຊາຊົນເລື່ອງການປະກາດຂອງໂຢຮັນບັບຕິສະໂຕ. ເພິ່ນຍົກຄວາມຟຸມເຟືອຍຂອງພວກເຈົ້ານາຍໃນໂລກມາປຽບທຽບກັບການຢູ່ກິນຂອງໂຢຮັນບັບຕິສະໂຕ.

ກ. ໃຫ້ອ່ານ ມທ 11:10 ຜູ້ຮັບໃຊ້ທີ່ຈັດແຈງຫົນທາງໄວ້ກ່ອນຫາພະອົງຄືໃຜ? __________

ຂ. ໃນ ມທ 11:11-12 ເຫັນຄຳ "ອານາຈັກ" ຈັກເທື່ອ? ________________

ຄ. ຕາມຄຳເວົ້າຂອງພະເຢຊູຜູ້ປົກຄອງໃນໂລກ(ຄືຜູ້ທີ່ຢູ່ໃນພະລາຊະວັງ) ຕ່າງກັນກັບໂຢຮັນບັບຕິສະໂຕຢ່າງ ໃດ? ________________________

| |
|---|
| ໃຫ້ທ່ານເອົາສໍສີແດງຂີດກ້ອງຄຳວ່າ "ລາຊະອານາຈັກ" ໃນ ມທ 11:11-12 |

**13** ກ. ໂຢຮັນຝາກຄຳຖາມຫຍັງມາ? ________________________

ຂ. ພະເຢຊູ ຍົກຫຼັກສອງປະການໃດມາທີ່ສະແດງວ່າ ພະເຢຊູ ຄື ພະເມຊີອາ ແທ້?

________________________________________

ຄ. ຄຳຕອບທີ່ ພະເຢຊູ ຍົກມາທັງສອງຂໍ້ນັ້ນ ເປັນຄວາມສຳເລັດຈາກຜູ້ທຳນວາຍໃດໃນພະຄຳພີເດີມ? ________________________

| |
|---|
| ໃນຕາຕະລາງສັດຕູຂອງອານາຈັກ ແຖວ "ຈາກຜູ້ປົກຄອງ" ແລະລຸ່ມຫ້ອງ "ແລະ ອີກ" ໃຫ້ທ່ານຂຽນ ຄຳຖາມຈາກ ໂຢຮັນບັບຕິສະໂຕ ແລະ ທັງບົດແລະຂໍ້ຈາກ ເອຊາຢາ ທີ່ ພະເຢຊູ ໃຊ້ເປັນຄຳຕອບ. |

**14** ກ. ໂຢຮັນບັບຕິສະໂຕບໍ່ໄດ້ຍິນ ພະເຢຊູ ເທດສະໜາຢູ່ຈ້າຍພູ ແລະບໍ່ໄດ້ເຫັນການອັດສະຈັນທີ່ ພະເຢຊູ ກະທຳ ໃນຄາລີ ເລເພາະເຫດການເຫຼົ່ານັ້ນເກີດມີຂຶ້ນໃນສະໄໝປີໃດ? _______

ຂ. ໃນປີນັ້ນ ໂຢຮັນ ຢູ່ໃສ? ________________________

ຄ. ສະເພາະໃນມັດທາຍ 11:11 ພະເຢຊູ ບອກວ່າໃນບັນດາຜູ້ທີ່ເກີດຈາກແມ່ຍິງບໍ່ມີຜູ້ໃດໃຫຍ່ກວ່າໃຜ? ________________________

ງ. ເຖິງວ່າໂຢຮັນບັບຕິສະໂຕປາກົດມາໃນພະຄຳພີໃໝ່ກໍ່ຕາມແຕ່ທີ່ຈິງເພິ່ນປະກາດໄປກ່ອນ ຍຸກສະໄໝພະຄຳພີ ໃໝ່ຈຶ່ງຖືໄດ້ວ່າເພິ່ນເປັນຜູ້ທຳນວາຍຄົນສຸດທ້າຍຂອງພະສັນຍາໃດ?

____________________________________________

**15** ໃຫ້ອ່ານ ມທ 11:13-14 ໂຢຮັນຄືຜູ້ທຳນວາຍໃດໃນຍຸກພະຄຳພີເດີມ? ____________

**16** ໂຢຮັນເຮັດຄ້າຍຄືກັນກັບຜູ້ທຳນວາຍໃນພະຄຳພີເດີມ.

ກ. ເພິ່ນນຸ່ງເຄື່ອງເຮັດດ້ວຍຫຍັງ? ____________________________

ຂ. ຮັດແອວດ້ວຍສາຍຫຍັງ? ______________________________

ຄ. ກິນຫຍັງເປັນອາຫານ? ______________________________

ງ. ປ່າວປະກາດໃນບ່ອນໃດ? ______________________________

ຈ. ເລື່ອງນີ້ເຮົາອ່ານແລ້ວໃນມັດທາຍບົດໃດ ຂໍ້ໃດ? ____________________

ສ. ເພິ່ນຄືຜູ້ທຳນວາຍໃດໃນພະຄຳພີເດີມ? _______________________

ຊ. ເຮົາອ່ານເລື່ອງຂອງເພິ່ນໃນພະຄຳພີເດີມ ຫຼື ພະຄຳພີໃໝ່? _______________

ແຕ່ ພະເຢຊູ ເຮັດບໍ່ຄືກັບ ໂຢຮັນບັບຕິສະໂຕ

ຍ. ເພິ່ນຮ່ວມຊະນິດກັບຄົນທົ່ວໄປຢ່າງການສົມລົດໃນບ້ານໃດ? _____________

ດ. ແລ້ວເພິ່ນກໍ່ກິນລ້ຽງໃນບ້ານຂອງຄົນເກັບພາສີຊື່ຫຍັງ? ________________

**17** ໃນ ມັດທາຍ 11:16-19 ມີຄຳອຸປະມານ້ອຍ ໃນເລື່ອງນີ້ ມີເດັກນ້ອຍທີ່ນັ່ງກາງຕະຫຼາດ ພວກໜຶ່ງເວົ້າວ່າ "ຕູເປົ່າປີ່ໃຫ້ສູ ແຕ່ສູບໍ່ໄດ້ຟ້ອນລຳ" ອີກພວກໜຶ່ງກ່າວວ່າ "ຕູຮ້ອງໃຫ້ຮ່ຳໄຮ ແຕ່ສູບໍ່ໄດ້ຕີອົກຕ້ອນຮັບ"

ກ. ພວກໃດປຽບເໝືອນການປະກາດຂອງ ພະເຢຊູ? ___________________

ຂ. ພວກໃດປຽບເໝືອນການປະກາດຂອງ ໂຢຮັນບັບຕິສະໂຕ? _______________







**18** ຮູບໃດ ສະແດງແບບຊີວິດຂອງ ພະເຢຊູ? ________________________

ຮູບໃດ ສະແດງແບບຊີວິດຂອງ ໂຢຮັນບັບຕິສະໂຕ? ___________________

**19** ໃຫ້ອ່ານ ມທ 11:17-19 ອີກ ແລ້ວເລືອກໝາຍເອົາຂໍ້ໃດ ທີ່ຖືກກັບຄຳພີ.

ກ. ປະຊາຊົນເຫັນພ້ອມກັບ ພະເຢຊູ. ຄ. ປະຊາຊົນບໍ່ເຫັນພ້ອມກັບ ພະເຢຊູ.

ຂ. ປະຊາຊົນກໍ່ເຫັນພ້ອມກັບ ໂຢຮັນ. ງ. ປະຊາຊົນກໍບໍ່ເຫັນພ້ອມກັບໂຢຮັນ.

**20** ກ. ແບບຊີວິດຂອງ ໂຢຮັນ ແລະຂອງ ພະເຢຊູ ແຕກຕ່າງກັນຢ່າງໃດ? ______________

________________________________________________________________

ຂ. ພະເຢຊູ ຍົກຄໍາອຸປະມາຫຍັງມາສະແດງເລື່ອງນີ້? ___________________________

ຄ. ໂຢຮັນຄືຜູ້ທໍານວາຍໃດໃນພະຄໍາພີເດີມ? _______________________________

ງ. ໃນພະທໍາ ມທ 11:11 ແມ່ນສິ່ງໃດທີ່ ໂຢຮັນບັບຕິສະໂຕ ຈະບໍ່ເຫັນເຊິ່ງເປັນການເລີ່ມຕົ້ນຂອງອານາຈັກສະ ຫວັນພະເຢຊູ ຈຶ່ງກ່າວວ່າ "ຜູ້ນ້ອຍທີ່ສຸດໃນອານາຈັກສະຫວັນກໍ່ໃຫຍ່ກວ່າໂຢຮັນອີກ"_____________________________________________

________________________________________________________________

**21** ທ່ານໄດ້ຮຽນຮູ້ດີ ເລື່ອງຜູ້ທີ່ມີອໍານາດໃນການປົກຄອງມາຂົ່ມເຫັງ ໂຢຮັນບັບຕິສະໂຕ ໃຫ້ທ່ານກັບໄປເບິ່ງໜ້າປົກ ບົດນີ້ ອີກ ໃນຮູບສອງໃບທີ່ຕໍ່ມາຂ້າງຂວາຈາກຄໍາ "ການຕໍ່ສູ້ຈາກຜູ້ປົກຄອງ" ຮູບ ກ ສະແດງເຖິງໃຜ? _______________________________________

ຮູບ ຂ ເດ ສະແດງເຖິງໃຜ?_____________________________________________

| |
|---|
| ຖ້າວ່າທ່ານກວດຄໍາຕອບມາແລ້ວໃຫ້ທ່ານຂຽນຊື່ສອງຄົນນັ້ນໄວ້ໃນເສັ້ນກ້ອງ ຮູບ ກ ແລະ ຂ ຕາມບ່ອນທີ່ຖືກ |

*ບາດນີ້ໃຫ້ເຮົາພາກັນພິຈາລະນາເລື່ອງບັນຫາທີ່ອາດຈະເກີດຂຶ້ນໃນເວລາຜູ້ມີອໍານາດປົກຄອງດ້ານການເມືອງ ບໍ່ເຫັນພ້ອມກັບຫຼັກຄວາມເຊື່ອຂອງຄຼິດສະຕຽນ ບາງບ່ອນມີຜູ້ຕໍ່ສູ້ຢ່າງ ໜັກ ບາງບ່ອນຕໍ່ສູ້ບໍ່ໜັກປານໃດ ບາງບ່ອນບໍ່ຕໍ່ສູ້ເລີຍ. ແຕ່ພວກຄຼິດສະຕຽນໃນທົ່ວໂລກສົມຄວນຈະຕຽມຕົວໄວ້ເພື່ອວ່າມີການຂົ່ມເຫັງເກີດມີຂຶ້ນ ຄົນຄຼິດສະຕຽນໃນປະເທດຕ່າງໆທີ່ມີການຂົ່ມເຫັງເຄີຍປະເຊີນໜ້າຜູ້ຕໍ່ສູ້ຢ່າງໃດ ກໍ່ຍັງຕິດຕາມຄໍາສອນຂອງ ພະເຢຊູ ອັນໜຶ່ງພວກຄຼິດສະຕຽນໃນທຸກປະເທດຄວນທີ່ຈະມີຄື:*

1. *ຈົ່ງອ້ອນວອນເພື່ອຄຼິດສະຕຽນໃນບ່ອນໃດທີ່ເຂົາຖືກການຂົ່ມເຫັງ ເຂົາຈຶ່ງຈະບໍ່ອ່ອນລົງແລະບໍ່ຂາດຈາກ ຄວາມເຊື່ອ.*
2. *ຈົ່ງຄຶດສົງສານຄຼິດສະຕຽນທີ່ມີຜູ້ຕໍ່ສູ້ ໜັກ ບໍ່ຕ້ອງຕິຕຽນເຂົາ ເພາະຄວາມເຊື່ອບໍ່ໝັ້ນຄົງ.*
3. *ແຕ່ສ່ວນທ່ານເອງ ຈົ່ງກ້າຫານຍຶດຄວາມເຊື່ອຢ່າງໝັ້ນຄົງ.*
4. *ແລ້ວໃຫ້ທ່ານຕຽມຕົວໄວ້ດ້ານຈິດໃຈແລະດ້ານຮ່າງກາຍເພື່ອອະນາຄົດອາດຈະພົບການຂົ່ມເຫັງເກີດມີຂຶ້ນ.*

# ແຜນທີ່ປະເທດປາແລັດສະຕິນ ສະໄໝ ພະເຍຊູ



## ການຕໍ່ສູ້ຈາກປະຊາຊົນທົ່ວໄປ

**22** ໃຫ້ທ່ານອ່ານ ມທ 11:20-24 ບໍ່ແມ່ນພຽງແຕ່ຜູ້ມີອຳນາດດ້ານການເມືອງ ທີ່ບໍ່ຍອມຮັບພະຄຳຂອງພະອົງເລື່ອງ ອານາຈັກເທົ່ານັ້ນ ແຕ່ປະຊາຊົນທົ່ວໄປກໍ່ບໍ່ຮັບຟັງ. ໃນຕອນພະຄຳພີນີ້ ພະເຢຊູ ຍົກຊື່ 6 ເມືອງຄື: ໂຂລາຊິນ ເບດຊາອີດາ ຊີໂດນ ຕີໂລ ການເປນາອູມ ໂຊໂດມ. ພະເຢຊູ ໄດ້ເຮັດການອັນສະຈັນໃຫຍ່ໃນ 3 ເມືອງແຕ່ເຂົາບໍ່ຍອມຮັບທີ່ຈະເຂົ້າໃນອານາຈັກສະຫວັນເພາະບໍ່ຍອມຖິ້ມໃຈເກົ່າເອົາໃຈໃໝ່ ຄື 3 ເມືອງໃດແດ່? ____________________

____________________________________________________________

**23** ໃນແຜນທີ່ປະເທດ ປາແລັດສະຕິນ ໃນສະໄໝພະເຢຊູ ທ່ານຈະເຫັນວ່າເມືອງ ໂຂລາຊິນ ແລະເມືອງ ເບດຊາອິ ດາ ຢູ່ໃກ້ກັບເມືອງ ກາເປນາອູມ.

ກ. ແມ່ນສອງເມືອງໃດທີ່ຢູ່ແຄມທະເລສາບຄາລີເລ? ________________________

ຂ. ສອງເມືອງໃດຢູ່ຟາກແມ່ນ້ຳຢໍດາເນທິດຕາເວັນຕົກໃນແຂວງຄາລີເລ? ____________

ຄ. ເມືອງໃດຢູ່ຟາກແມ່ນ້ຳຢໍດາເນທິດຕາເວັນອອກໃນແຂວງອີຕູລາຍ? _____________

ງ. ເພື່ອເຮັດອາຊີບຫາປາ ອັນເດອາ ແລະ ເປໂຕ ຢູ່ເມືອງ ກາເປນາອູມ. ໃນ ໂຢຮັນ 1:44 ອັນເດອາເປໂຕແລະ ຟີລິບ ເກີດຢູ່ໃສ? ______________________________

**24** ແມ່ນສາມເມືອງໃດບໍ່ຍອມປະໃຈເກົ່າເອົາໃຈໃໝ່? __________________________

____________________________ ____________________________

ໃນຕາຕະລາງສັດຕູຂອງອານາຈັກໃນແຖວດຽວກັນກັບ "ຈາກປະຊາຊົນທົ່ວໄປ" ໃຫ້ຂຽນດັ່ງຕໍ່ໄປນີ້ຄື:
ລຸ່ມຫ້ອງ "ຜູ້ທີ່ຕໍ່ສູ້" ໃຫ້ຂຽນຊື່ 3 ເມືອງນັ້ນໄວ້
ລຸ່ມຫ້ອງ "ດ້ວຍວິທີໃດ" ໃຫ້ຂຽນຄຳວ່າ "ເຂົາເຫັນການອັດສະຈັນໃຫຍ່ກໍ່ຕາມແຕ່ຍັງບໍ່ຮັບອານາຈັກ"

ໃຫ້ ທ່ານ ຂຽນຊື່ ສາມເ ມືອງ ນັ້ນ ໄວ້ໃ ສ່ ແຜນ ທີ່ ຮູບ ຄ ໃນໜ້າ ປົກ ບົດ ນີ້

*ລູດສະຕຽນທຸກຄົນທີ່ເວົ້າຄວາມພີຍານແລະປະກາດພະທຳຂອງພະອົງຈະມີຄົນຕໍ່ສູ້ບາງຄົນ. ທ່ານຍົກຕົວຢ່າງຈ າກປະ ສົບປະການຂອງທ່ານເອງທີ່ຈະເຫຼົ່າ ໃຫ້ໝູ່ໃນປະຊຸມຟັງໄດ້ບໍ່? ທ່ານຕອບຜູ້ຕໍ່ສູ້ຢ່າງໃດ?*

**25** ເຮົາໄດ້ຮຽນເລື່ອງການຕໍ່ສູ້ຈາກສອງດ້ານມາແລ້ວ ຄືດ້ານໃດແດ່? ______________

**26** ເລື່ອງການຕໍ່ສູ້ຈາກນັກສາດສະໜາເປັນເລື່ອງທີ່ຍາວຫຼາຍເຮົາຈະເລື່ອນເລື່ອງນັ້ນໄປໄວ້ຮຽນໃນບົດຕໍ່ໄປ.

ກ. ໃນບົດຂ້າງໜ້າເຮົາຈະຮຽນເລື່ອງການຕໍ່ສູ້ຈາກດ້ານໃດ? ____________________

ຂ. ແຕ່ຍັງມີພວກໃດທີ່ຕໍ່ສູ້ເຮົາທີ່ຈະຮຽນຮູ້ໃນບົດນີ້? ________________________

## ການຕໍ່ສູ້ຈາກຍາດພີ່ນ້ອງຂອງເຮົາ

**27** ໃຫ້ອ່ານມັດທາຍ 12:46-50 ແມ່ນຜູ້ໃດຢືນຢູ່ລໍຖ້າພະອົງຂ້າງນອກ?

_________________________ ແລະ _________________________

**28** ທຳມະດາເຮົາບໍ່ຄິດເລີຍວ່າຍາດພີ່ນ້ອງຂອງພະອົງຈະມາຕໍ່ສູ້ດອກ ແຕ່ທີ່ຈິງ ພະເຢຊູ ເຕືອນພວກສາວົກເລື່ອງນັ້ນ ທານັ້ນໃນ ມັດທາຍ ບົດ 10

ກ. ຄຳເຕືອນນັ້ນຢູ່ໃນບົດ 10 ຂໍ້ໃດແດ່? _________________________

ຂ. ຮູບໃດໃນໜ້າປົກບົດນີ້ສະແດງເຖິງການຕໍ່ສູ້ຈາກຍາດພີ່ນ້ອງ? _______________

| |
|---|
| ໃຫ້ທ່ານຂຽນ "ມານດາ" ແລະ "ພວກນ້ອງ" ໃສ່ໄວ້ກ້ອງຮູບນັ້ນ |

| |
|---|
| ໃນຕາຕະລາງເລື່ອງສັດຕູຂອງອານາຈັກ ຫ້ອງ "ຍາດພີ່ນ້ອງ" ແຖວ "ຜູ້ທີ່ຕໍ່ສູ້" ລົງໄປ ໃຫ້ທ່ານຂຽນ ຄຳວ່າ "ມານດາ" ແລະ "ພວກນ້ອງ"ໃສ່ໄວ້. |

**29** ມັດທາຍ 12:46-50 ຂຽນບັນທຶກພຽງແຕ່ວ່າ ມານດາ ແລະພວກນ້ອງຊາຍມາຫາໂອກາດຈະເວົ້າກັບພະອົງ ແຕ່ ບໍ່ໄດ້ ບອກເລື່ອງທີ່ຈະເວົ້າ. ມາລະໂກລາຍງານຢ່າງລະອຽດກວ່າ ໃນມາລະໂກ 3:31-35 ແລະ ອ່ານມາລະໂກ 3:21 ອີກດ້ວຍ. ແມ່ນເພາະເຫດໃດທີ່ຍາດພີ່ນ້ອງຂອງພະອົງມາຫາ? _________________________

_________________________________________________

**30** ໃນໂຢຮັນ 7:5 ພວກນ້ອງຂອງພະອົງຄິດຢ່າງໃດ ເລື່ອງພະອົງ? _______________

**31** ພວກມານດາແລະນ້ອງຂອງພະອົງອາດຈະຢ້ານການປອງຮ້າຍຂອງພວກເຈົ້ານາຍແລະນັກສາດສະໜາເພາະຄຳ ສອນຂອງພະອົງແຕກຕ່າງກັບພວກເຂົາປານນັ້ນ. ຜົນສຸດທ້າຍຍາດພີ່ນ້ອງຂອງພະອົງມາຕໍ່ສູ້ຊ້ຳຕື່ມອີກ. ໃນ ມັດທາຍ 10:36 ອ້າງເຖິງການຕໍ່ສູ້ຈາກດ້ານໃດ?

_________________________________________________

| |
|---|
| ໃນຕາຕະລາງສັດຕູຂອງອານາຈັກຂ້າງແຖວ "ຍາດພີ່ນ້ອງ" ລຸ່ມຫ້ອງ "ດ້ວຍວິທີໃດ" ໃຫ້ທ່ານຂຽນ ຄຳວ່າ "ຈະມາຈັບພະອົງໄປ" ແລະ "ມທ 10:34-38" ກັບ "ໂຢຮັນ 7:5" ໃນແຖວ "ແລະອີກ" ໃຫ້ຂຽນ "ມາລະໂກ 3:21" |

**32** ພະເຢຊູ ອາດຈະເຈັບໃຈຫຼາຍທີ່ຍາດພີ່ນ້ອງຂອງພະອົງເອງບໍ່ໄດ້ເຊື່ອໃຈ ແຕ່ເປັນຢ່າງໃດກໍ່ຕາມພະອົງຍັງສວຍ ໂອກາດສອນວ່າ ລາຊະອານາຈັກສະຫວັນບໍ່ອີງອາໄສຜູ້ທີ່ເປັນພີ່ນ້ອງເກີດໃນຄອບຄົວ ແຕ່ອາໄສຜູ້ທີ່ເປັນພີ່ນ້ອງດ້ານຈິດວິນຍານໃນມັດທາຍ10:36-39 ນີ້ ພະອົງສອນວ່າແມ່ນພວກໃດຢູ່ໃກ້ສິດກັບພະອົງ? (ເລືອກ)

ກ. ມານດາຂອງພະອົງ.
ຂ. ພວກນ້ອງຊາຍຄີງໆ.
ຄ. ພວກນ້ອງສາວຄີງໆ
ງ. ຜູ້ທີ່ຮັກແລະຕິດຕາມພະອົງໄປ.

**33** ຖ້າວ່າດັ່ງນັ້ນແລ້ວ ປະກົດວ່າເຮົາບໍ່ຕ້ອງການມີຜູ້ກາງລະຫວ່າງ ພະເຢຊູ ກັບເຮົາເພາະຜູ້ໃດທີ່ຮັກແລະຕິດຕາມ ພະອົງໄປຢູ່ໃກ້ສິດກັບພະອົງຫຼາຍກວ່າຜູ້ເປັນຍາດພີ່ນ້ອງເກີດໃນຄອບຄົວແຕ່ບໍ່ເຊື່ອພະອົງ. ຕາມຂໍ້ພະຄຳພີ 1 ຕີມທ 2:5 ແມ່ນໃຜເປັນຜູ້ກາງລະຫວ່າງເຮົາກັບ ພະເຈົ້າ?

______________________________________________________________

**34** ຫຼັງຈາກ ພະເຢຊູ ຄືນພະຊົນແລ້ວ ມານດາ ແລະ ພວກນ້ອງຂອງພະອົງກໍ່ຈຶ່ງເຊື່ອດ້ວຍ. ໃນ ກິຈະການ 1:12-14 ແມ່ນຍາດພີ່ນ້ອງຜູ້ໃດແດ່ຂອງພະອົງທີ່ຢູ່ຮ່ວມກັບພວກລູກສິດຂອງພະອົງໃນວັນເພັນເຕຄໍສະເຕ? ______________________________________________

**35** ດັ່ງນັ້ນທັງສາວົກຂອງພະອົງ ທັງມານດາແລະນ້ອງຊາຍຂອງພະອົງ ພ້ອມທັງລູກສິດທັງຫຼາຍຂອງພະອົງຄົນອື່ນໆ ທີ່ເຊື່ອໃນພະອົງແລ້ວນັ້ນໄດ້ຮັບເອົາພະວິນຍານບໍລິສຸດ.

ກ. ແຕ່ເຂົາໄດ້ເຂົ້າໃນອານາຈັກສະຫວັນ ເພາະເຂົາຮັບເອົາຜູ້ໃດເປັນພະຜູ້ຊ່ອຍ?________

ຂ. ການເປັນຍາດພີ່ນ້ອງເກີດໃນຄອບຄົວຂອງ ພະເຢຊູ ເປັນເງື່ອນໄຂບໍ່?_____________

**36** ມັດທາຍ ບົດ 12 ສອນວ່າການມີສ່ວນໃນອານາຈັກສະຫວັນອີງອາໄສຄວາມສຳພັນດ້ານຈິດວິນຍານ ແຕ່ບໍ່ໄດ້ ອີງອາໄສ ຄວາມສຳພັນຝ່າຍຄອບຄົວ ການນັ້ນເຫັນໃນຂໍ້ໃດແດ່?

______________________________________________________________

ເພື່ອເປັນການປຶກສາຫາລືກັນໃນປະຊຸມ ໃຫ້ທ່ານອ່ານຕອນພະຄຳພີເຫຼົ່ານີ້ກ່ອນ:

| | |
|---|---|
| ມທ 3:9 | ມທ 10:34-38 |
| ມທ 8:11-12 | ມທ 12:48-50 |
| ມທ 10:21 | ຢຣ 3:1-3 |

1. ຕອນພະຄຳພີເຫຼົ່ານັ້ນສອນຢ່າງໃດກ່ຽວກັບການໄດ້ລອດພົ້ນ ການທີ່ທ່ານຈະໄດ້ລອດ ດ້ວຍ ພະເຢຊູ ເປັນພະຜູ້ຊ່ວຍອີງອາໄສຄວາມສຳພັນດ້ານວິນຍານຫຼືດ້ານຄອບຄົວ? ໃຫ້ຍົກຫຼັກຖານມາ.
2. ເຮົາຕ້ອງມີຜູ້ຊ່ວຍເວົ້າລະຫວ່າງເຮົາກັບ ພະເຢຊູ ບໍ່?

*ຢ່າລືມຕອບບົດເສັງໂລດເດີ!*

## ຄຳຕອບ:

**1** *ມທ ບົດ 11 ແລະ 12*

**2** *ຈາກພວກຜູ້ປົກຄອງ. ຈາກປະຊາຊົນທົ່ວໄປ. ຈາກນັກສາດສະໜາ. ຈາກຍາດພີ່ນ້ອງ.*

**3** *ຈາກຜູ້ປົກຄອງ.*

**4** *ມທ 11:1-19 ຜູ້ປົກຄອງ. ມທ 11:20-30 ປະຊາຊົນ. ມທ 12:1-45 ນັກສາດສະ ໜາ. ມທ 12:46-50 ຍາດພີ່ນ້ອງ.*

**5** *ກ. ໃນຄຸກ. ງ. ຢູດາ ແລະ ເປີເລຍ ຂ. ເຮໂລດຜູ້ປົກຄອງເມືອງ. ຈ. ເປີເລຍ ຄ. ຄາລີເລ ແລະ ເປີເລຍ.*

**6** *ສຳເລັດ. ຮຸນແຮງ.*

**7** *ຂ. ຖືກ*

**8** *ກ. ຊາດນິຍົມ. ຄ. ກະສັດ. ຂ. ຢາໂກໂບ ໂຢຮັນ. ງ. ຍາດ...ຮຸນແຮງ.*

**9** *ຢູ່ພູສູງ.*

**10** *ການອັດສະຈັນ ແລະ ປ່າວປະກາດ.*

**11** *ກ. ອຊຢ 35:5-6 ຂ. ເວາຄວາມໜຸນໃຈ...*

**12** *ກ. ໂຢຮັນບັບຕິສະໂຕ. ຂ. ສອງ*
*ຄ. ເຂົານຸ່ງຫົ່ມເຄື່ອງລະອຽດອ່ອນໃນພະລາຊະວັງ ແຕ່ໂຢຮັນຢູ່ໃນປ່າ. (ຄຳຄ້າຍຄືກັນກໍ່ໄດ້)*

**13** *ກ. ທ່ານເປັນຜູ້ທີ່ຈະມາ ຫຼື ຈະຕ້ອງຖ້າຜູ້ອື່ນ.*
*ຂ. ການອັດສະຈັນ ແລະ ການປ່າວປະກາດ. ຄ. ເອຊາຢາ.*

**14** *ກ. ປີທີ່ ພະເຢຊູ ມີຊື່ສຽງດີ. ຂ. ໃນຄຸກ. ຄ. ໂຢຮັນບັບຕິສະໂຕ. ງ. ເດີມ.*

**15** *ເອລີຢາ*

**16** *ກ. ຂົນໂອດໂອ. ຂ. ໜັງ. ຄ. ຕັກແຕນແລະນ້ຳເຜິ້ງປ່າ. ງ. ປ່າ.*
*ຈ. ບົດ 3:1-4 ສ. ເອລີຢາ ຊ. ໃໝ່ ຍ.ການາ ດ. ມັດທາຍ.*

**17** *ກ. ພວກທີ່ເວົາວ່າ "ຕູເປົ່າປີ່ໃຫ້ສູ ແຕ່ສູບໍ່ໄດ້ຟ້ອນລຳ"*
*ຂ. ພວກທີ່ເວົາວ່າ "ຕູຮ້ອງໃຫ້ຮ່ຳໄຮ ແຕ່ສູບໍ່ໄດ້ຕີອົກຕ້ອນຮັບ"*

**18** *ຮູບ ກ. ຮູບ ຂ.*

**19** *ຄ. ແລະ ງ. ຖືກ*

**20** *ກ. ພະເຢຊູ ຮ່ວມຢູ່ກັບຄົນຫຼາຍ ສ່ວນໂຢຮັນຢູ່ໃນປ່າ...*
*ຂ. ເລື່ອງເດັກນ້ອຍທີ່ນັ່ງຢູ່ກາງຕະຫຼາດ. ຄ. ເອລີຢາ.*
*ງ. ໂຢຮັນຈະບໍ່ເຫັນ ພະເຢຊູ ຕາຍແລ້ວຄືນຂຶ້ນມາ*

**21** *ຮູບ ກ ຢູ່ໜ້າປົກແມ່ນ ໂຢຮັນບັບຕິສະໂຕ. ຮູບ ຂ ແມ່ນ ເຮໂລດຜູ້ປົກຄອງເມືອງ.*

**22** *ໂຂລາຊິນ ເບດຊາອີດາ ກາເປນາອູມ*

**ຄຳຕອບ (ຕໍ່):**

**23** *ກ. ກາເປນາອູມ ເບດຊາອີດາ ຂ. ກາເປນາອູມ ໂຂລາຊິນ ຄ. ເບດຊາອີດາ*
*ງ. ເບດຊາອີດາ*

**24** *ກາເປນາອູມ ໂຂລາຊິນ ເບດຊາອີດາ*

**25** *ຜູ້ປົກຄອງ ແລະ ປະຊາຊົນທົ່ວໄປ.*

**26** *ກ. ນັກສາດສະໜາ. ຂ. ຍາດພີ່ນ້ອງ.*

**27** *ມານດາແລະພວກນ້ອງຊາຍຂອງພະອົງ.*

**28** *ກ. ຂໍ້ 34-39 ຂ. ຮູບ ຈ*

**29** *ເຂົາຄິດວ່າພະອົງເສຍຈິດແລ້ວ ເຂົາຈຶ່ງຈະມາຈັບເອົາພະອົງໄປ.*

**30** *ເຂົາບໍ່ເຊື່ອ.*

**31** *ຍາດພີ່ນ້ອງ.*

**32** *ງ. ຖືກ*

**33** *ພະເຢຊູຄຣິດ*

**34** *ມານດາ ແລະ ນ້ອງຊາຍ*

**35** *ກ. ພະເຢຊູ ຂ. ບໍ່*

**36** *ມທ 12:46-50*